ພຣະຄຣິສທີ່ຊົງພຣະຊົນ

ປະຈັກພະຍານຂອງອັຄສາວົກ
ສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ

ໃນຂະນະທີ່ເຮົາສເລີມສລອງວັນເກີດຂອງພຣະເຢຊູຄຣິສ ຊຶ່ງພຣະອົງໄດ້ມາສູ່ໂລກສອງພັນປີຜ່ານມາແລ້ວ, ເຮົາໄດ້ເປັນພະຍານເຖິງຄວາມເປັນຈິງຂອງຊີວິດຂອງພຣະອົງ ອັນຫາທີ່ປຽບບໍ່ໄດ້ ແລະເຖິງອຳນາດອັນບໍ່ມີຂອບເຂດຂອງການເສັຽສະລະຊົດໃຊ້ທີ່ຍິ່ງໃຫຍ່ຂອງພຣະອົງ ຊຶ່ງບໍ່ເຄີຍມີມະນຸດຄົນໃດ ແລະຈະບໍ່ມີມະນຸດຄົນໃດຢູ່ໃນໂລກນີ້ ທີ່ຈະມີອິດທິພົນເຫນືອຜູ້ຄົນ ຫລາຍໄປກວ່າພຣະອົງໄດ້.

ພຣະອົງຊົງເປັນພຣະເຢໂຮວາອົງຍິ່ງໃຫຍ່ແຫ່ງພຣະຄັມພີເດີມ, ຊົງເປັນພຣະເມຊີ ຂອງພຣະຄັມພີໃຫມ່. ພາຍໃຕ້ການນຳພາຂອງພຣະບິດາຂອງພຣະອົງ, ພຣະອົງຊົງໄດ້ສ້າງໂລກນີ້. "ພຣະເຈົ້າຊົງສ້າງສິ່ງທັງປວງຂຶ້ນມາໂດຍພຣະທັມ ໃນບັນດາສິ່ງທີ່ເປັນມານັ້ນ ບໍ່ມີຈັກສິ່ງທີ່ເປັນມາໂດຍນອກຈາກພຣະທັມ" (ໂຢຮັນ ๑:๓). ເຖິງແມ່ນວ່າພຣະອົງບໍ່ໄດ້ມີບາບ, ແຕ່ພຣະອົງຍັງໄດ້ຮັບບັບຕິສະມາ ເພື່ອໃຫ້ຖືກກັບຄວາມຊອບທັມທຸກປະການ. ພຣະອົງ "ຊົງໄດ້ສະເດັດໄປທຸກຫົນທຸກແຫ່ງເຮັດຄຸນງາມຄວາມດີ" (ກິຈການ ๑๐:๓๘), ແຕ່ຊົງຖືກຜູ້ຄົນຄຸຖຸກຫຍຍົດຍານເພາະການນັ້ນ. ພຣະກິດຕິຄຸນຂອງພຣະອົງເປັນຂ່າວສານຂອງຄວາມສງົບແລະເປັນຂ່າວປະເສີດ. ພຣະອົງຊົງໄດ້ຮ້ອງໃຫ້ທຸກຄົນເຮັດຕາມຕົວຢ່າງຂອງພຣະອົງ. ພຣະອົງໄດ້ຍ່າງໄປຫາທຸກຫົນທຸກແຫ່ງໃນຂົງເຂດຟີລິສຕິນ, ໄດ້ປິ່ນປົວຄົນເຈັບປ່ວຍ, ໄດ້ໂຜດຄົນຕາບອດໃຫ້ເຫັນຮູ່ງ, ແລະໄດ້ນຳຄົນຕາຍເປັນຄືນມາ. ພຣະອົງຊົງໄດ້ສອນຄວາມຈິງກ່ຽວກັບນິຣັນດອນ, ຊົງໄດ້ບອກຄວາມຈິງໃຫ້ເຮົາຮູ້ເຖິງຊີວິດກ່ອນເກີດຂອງເຮົາ, ຊົງໄດ້ບອກເຖິງຈຸດປະສົງຂອງຊີວິດເຮົາໃນໂລກນີ້, ແລະເຖິງການເຕີບໂຕແລະການພັດທະນາຕົນຂອງບຸດແລະທິດາຂອງພຣະຜູ້ເປັນເຈົ້າ ໃນຊີວິດທີ່ຈະມາເຖິງ.

ພຣະອົງຊົງໄດ້ຈັດຕັ້ງສົນຣະລຶກຂຶ້ນ ເພື່ອເປັນສິ່ງເຕືອນໃຫ້ເຮົາລະນຶກເຖິງການເສັຽສະລະຊົດໃຊ້ຄັ້ງຍິ່ງໃຫຍ່ຂອງພຣະອົງ. ພຣະອົງໄດ້ຖືກຈັບກຸມແລະຖືກກ່າວຫາໃນເຣື່ອງທີ່ບໍ່ເປັນຄວາມຈິງ, ໄດ້ຖືກຕັດສິນລົງໂທດ ເພື່ອສນອງຄຳຮ້ອງຂອງຝູງຊົນ, ແລະໄດ້ຖືກສັ່ງໃຫ້ປະຫານຊີວິດໂດຍການຄຶງໄວ້ເທິງໄມ້ກາງແຂນ. ພຣະອົງຊົງໄດ້ສະລະຊີວິດເພື່ອໃຊ້ແທນບາບຂອງມວນມະນຸດທັງປວງ. ພຣະອົງຊົງເປັນຂອງປະທານອັນຍິ່ງໃຫຍ່ ທີ່ຊົງມອບໃຫ້ແກ່ທຸກຄົນໃນໂລກນີ້.

ພວກເຮົາຂໍເປັນພະຍານຢ່າງຫນັກແຫນ້ນວ່າ ຊີວິດຂອງພຣະອົງ ອັນຊຶ່ງເປັນສິ່ງສຳຄັນຫລາຍທີ່ສຸດໃນປວັດສາດທັງຫມົດຂອງມະນຸດ ບໍ່ໄດ້ເລີ້ມຕົ້ນໃນເມືອງເບດເລເຮັມ ຫລືສິ້ນສຸດລົງທີ່ໄມ້ກາງແຂນເທົ່ານັ້ນ. ພຣະອົງຊົງເປັນພຣະບຸດຜູ້ທຳອິດຂອງພຣະບິດາ, ຊົງເປັນພຣະບຸດທີ່ຖືກຳເນີດອົງດຽວໃນເນື້ອຫນັງ, ຊົງເປັນພຣະຜູ້ໄຖ່ຂອງໂລກ.

ພຣະອົງຊົງໄດ້ຟື້ນຄືນພຣະຊົນ "ແລະເປັນຄົນແລກໃນພວກຄົນທີ່ລ່ວງລັບໄປແລ້ວນັ້ນ" (๑ ໂກຣິນໂທ ๑๕:๒๐). ໃນເມື່ອພຣະອົງໄດ້ຟື້ນຄືນມາແລ້ວ, ພຣະອົງໄດ້ໄປຢ້ຽມຢາມຜູ້ທີ່ພຣະອົງຊົງຮັກຕອນພຣະອົງຍັງເປັນມະນຸດຢູ່ ແລະພຣະອົງກໍຍັງໄດ້ສະເດັດໄປປະຕິບັດສາສນາກິດໃຫ້ແກ່ "ຝູງແກະອື່ນອີກ" ຂອງພຣະອົງທີ່ອະເມຣິກາ ໃນສມັຍໂບຮານ (ໂຢຮັນ ๑๐:๑๖). ໃນໂລກຍຸກໃຫມ່, ພຣະອົງແລະພຣະບິດາຂອງພຣະອົງຊົງໄດ້ມາປາກົດຕໍ່ຊາຍຫນຸ່ມຄົນນຶ່ງ ຊື່ ໂຢເຊັບ ສມິທ ໃນເບື້ອງຕົ້ນຂອງ "ເວລາກຳນົດຄົບບໍຣິບູນ" (ເອເຟໂຊ ๑:๑๐).

ສາສດາ ໂຢເຊັບ ສມິທ ໄດ້ຂຽນກ່ຽວກັບພຣະຄຣິສຜູ້ທີ່ຊົງພຣະຊົນວ່າ: ພຣະເນດຂອງພຣະອົງເປັນເຫມືອນດັ່ງແປວໄຟ, ພຣະເກສາເທິງພຣະສຽນຂອງພຣະອົງຂາວເຫມືອນຫິມະບໍຣິສຸດ, ສີພຣະພັກສ່ອງສວ່າງ ເຫມືອຄວາມສວ່າງຂອງດວງຕາເວັນ, ແລະສຸຣະສຽງຂອງພຣະອົງຄືກັບກະແສນ້ຳ.

ພຣະອົງຊົງກ່າວວ່າ: "ພຣະອົງຊົງເປັນຜູ້ທຳອິດແລະຜູ້ສຸດທ້າຍ, ພຣະອົງຊົງເປັນຜູ້ມີຊີວິດ, ພຣະອົງຊົງເປັນຜູ້ຖືກປະຫານ, ພຣະອົງຊົງເປັນຜູ້ວິງວອນພຣະບິດາແທນເຮົາ" (see D&C 110:3-4).

"ເພາະເພິ່ນໄດ້ເຫັນພຣະອົງ ແມ່ນແຕ່ຢູ່ທາງຂວາພຣະຫັດຂອງພຣະຜູ້ເປັນເຈົ້າ ແລະເພິ່ນໄດ້ຍິນສຽງເປັນພະຍານວ່າ ພຣະອົງເປັນອົງດຽວທີ່ຖືກຳເນີດຂອງພຣະບິດາ—

"ວ່າໂດຍພຣະອົງ ແລະ ໂດຍທາງພຣະອົງ ແລະຈາກພຣະອົງ ໂລກຕ່າງໆຈຶ່ງຖືກສ້າງຂຶ້ນ ແລະຜູ້ອາໄສຢູ່ໃນນັ້ນເປັນບຸດແລະທິດາຂອງພຣະຜູ້ເປັນເຈົ້າ" (see D&C 76:22-24).

ພວກເຮົາຂໍປະກາດຢ່າງຫນັກແຫນ້ນວ່າ ຖານະປະໂຣຫິດແລະສາສນາຈັກຂອງພຣະອົງ ໄດ້ຖືກຟື້ນຄືນມາໃຫມ່ຢູ່ໃນໂລກນີ້— "ຖືກສ້າງຂຶ້ນເທິງຮາກຖານຂອງ . . . ພວກອັຄສາວົກແລະພວກຜູ້ປະກາດໄດ້ວາງລົງແລ້ວ ອົງພຣະເຢຊູຄຣິສເອງຊົງເປັນຫີນເສົາເອກ" (ເອເຟໂຊ ๔:๔๐).

ພວກເຮົາຂໍເປັນພະຍານວ່າ ພຣະອົງຈະກັບມາສູ່ໂລກອີກໃນມື້ນີ້ຕ່ຳ. "ແລະປະຊາຊົນທຸກຊາດ ກໍຈະໄດ້ເຫັນພຣະສງ່າຣາສີຂອງພຣະອົງ" (ເອຊາຢາ ๔๐:๕). ພຣະອົງຈະປົກຄອງເປັນ ຈອມເຈົ້າກະສັດ ແລະຈອມເຈົ້ານາຍ, ແລະທຸກຄົນຈະຄຸເຂົ່າລົງຂາບໄຫວ້ພຣະອົງ ແລະທຸກສິ່ງຈະສັນລະເສີນພຣະອົງ. ເຮົາແຕ່ລະຄົນຈະຖືກພິພາກສາຕາມການກະທຳຂອງເຮົາ ແລະຕາມສິ່ງທີ່ໃຈເຮົາປາຖນາ.

ໃນຖານະທີ່ເປັນອັຄສາວົກທີ່ຖືກແຕ່ງຕັ້ງຢ່າງຖືກຕ້ອງ, ພວກເຮົາຂໍເປັນພະຍານວ່າ ພຣະເຢຊູຊົງເປັນ ພຣະຄຣິສທີ່ຊົງພຣະຊົນຢູ່. ຊົງເປັນພຣະບຸດທີ່ອຳນາດຂອງພຣະຜູ້ເປັນເຈົ້າ. ພຣະອົງຊົງເປັນກະສັດ ເອມານູເອນ ຜູ້ຍິ່ງໃຫຍ່, ຜູ້ຊົງປະທັບຢູ່ທາງເບື້ອງຂວາພຣະຫັດຂອງພຣະບິດາຂອງພຣະອົງ. ພຣະອົງຊົງເປັນຄວາມສວ່າງ, ຊົງເປັນຊີວິດ, ແລະຊົງເປັນຄວາມຫວັງຂອງ ໂລກ. ທາງຂອງພຣະອົງ ເປັນທາງທີ່ນຳໄປຫາຄວາມສຸກໃນຊີວິດນີ້ ແລະໃນໂລກຫນ້າຈະໄດ້ມີຊີວິດອັນຕລອດໄປເປັນນິດ. ພວກເຮົາຂໍຂອບພຣະທັຍພຣະອົງສຳລັບຂອງປະທານທີ່ຫາຄ່າບໍ່ປຽບບໍ່ໄດ້ນັ້ນ ແລະຂໍຂອບພຣະທັຍສຳລັບພຣະບຸດແຫ່ງສັນ ຂອງພຣະອົງ.

ฝ่ายประธานสูงสุด

Thomas S. Monson
James K. Faust

สะพาอัครสาวกสิบสอง

Boyd K. Packer
L. Tom Perry
Dallin H. Oaks
Russell M. Nelson

M. Russell Ballard
Joseph B. Wirthlin
Richard G. Scott
Robert D. Hales
Jeffrey R. Holland
Henry B. Eyring

๑ ມີນາຄົມ ๒๐๐๐

© ๒๐๐๐ ໂດຍ Intellectual Reserve, Inc. ສງວນລິຂະສິດທຸກປະການ. ຈັດພິມໃນສະຫະລັດອະເມຣິກາ. ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: ๑๔/๗๗. ການແປໄດ້ຮັບອະນຸຍາດ: ๑๔/๗๗. ແປຈາກ *The Living Christ: The Testimony of the Apostles.* Laotian